ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0374

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2020

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການກຳນົດລາຄາຂາຍຜ້າອັດປາກ-ດັງ.

- ອີງຕາມ ແຈ້ງການສະບັບເລກທີ 0328/ອຄ.ກຄພນ, ລົງວັນທີ 26 ມີນາ 2020 ກ່ຽວກັບ ການກຳນົດລາຄາຂາຍຜ້າອັດປາກ-ດັງແຕ່ລະຊະນິດ.

ໃນສະພາບປະຈຸບັນ ຈຳນວນຜູ້ຕິດເຊື້ອໂຄວິດ-19 (COVID-19) ໃນຫຼາຍປະເທດທົ່ວໂລກຍັງເພີ່ມສູງຂຶ້ນ ເຮັດໃຫ້ຄວາມຕ້ອງການຜ້າປິດປາກ-ດັງ ໂດຍລວມຍັງມີຄວາມຕ້ອງການຫຼາຍ, ເວົ້າສະເພາະ ສປປ ລາວ ຄວາມຕ້ອງການຊົມໃຊ້ຜ້າອັດປາກ-ດັງ ຍັງເພີ່ມຂຶ້ນຫຼາຍ ເມື່ອທຽບກັບໄລຍະກ່ອນການລະບາດ, ເຮັດໃຫ້ສິນຄ້າຂາດຕະຫຼາດ ຊຶ່ງເປັນຜົນມາຈາກຄວາມຕ້ອງການທົ່ວໂລກ ແລະ ປະເທດເຮົາບໍ່ສາມາດຜະລິດໄດ້. ດ້ວຍເຫດນັ້ນ, ລັດຖະບານໄດ້ປະກາດເອົາຜ້າອັດປາກ-ດັງ ເຂົ້າເປັນສິນຄ້າຄວບຄຸມ ຊຶ່ງ ກະຊວງອຸດສາຫະກຳ ແລະ ການຄ້າໃນນາມຄະນະຊີ້ນຳວຽກງານຄຸ້ມຄອງລາຄາ ແລະ ຄ່າບໍລິການຂັ້ນສູນກາງ ໄດ້ອອກແຈ້ງການແນະນຳເຖິງບັນດາຄະນະຊີ້ນຳວຽກງານຄຸ້ມຄອງລາຄາ ແລະ ຄ່າບໍລິການຂັ້ນແຂວງ ກໍຄື ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ກ່ຽວກັບການກຳນົດລາຄາຜ້າອັດປາກ-ດັງ ແຕ່ລະຊະນິດ ໄປແລ້ວ 3 ຄັ້ງ, ບົນພື້ນຖານການປັບປຸງ, ເພີ່ມເຕີມເນື້ອໃນຂອງແຈ້ງການໃນແຕ່ລະຄັ້ງແມ່ນເພື່ອຄວາມເປັນເອກະພາບໃນການກຳນົດລາຄາຂາຍໃນແຕ່ລະໄລຍະຕາມຕົ້ນທຶນນຳເຂົ້າຕົວຈິງ.

## ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະສານກັບ ບໍລິສັດນຳເຂົ້າອຸປະກອນການແພດ, ບໍລິສັດການຢາ ຂອງແຂວງ ຫຼື ຫົວໜ່ວຍທຸລະກິດຕ່າງໆ ທີ່ມີເງື່ອນໄຂ, ມີທຶນ ແລະ ສາມາດນຳເຂົ້າຜ້າອັດປາກ-ດັງ ມາໄດ້ ແລະ ບໍລິສັດ ທີ່ມີຈຸດປະສົງໃນການຈຳໜ່າຍຜ້າອັດປາກ-ດັງ ຊຶ່ງບໍລິສັດຕ່າງໆເຫຼົ່ານັ້ນຕ້ອງໄດ້ມາລົງທະບຽນກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ໝາຍວ່າຕ້ອງແຈ້ງເຈດຈຳນົງວ່າສາມາດນຳເຂົ້າຜ້າອັດປາກ-ດັງ ມາຈຳໜ່າຍໄດ້ ແລະ ບໍລິສັດຕ້ອງແຈ້ງຂໍ້ມູນຕົ້ນທຶນນຳເຂົ້າ ພ້ອມທັງສິ່ງຕົວຢ່າງຜ້າອັດປາກ-ດັງ ທີ່ຈະນຳເຂົ້າມາຈຳໜ່າຍເພື່ອໃຫ້ເຈົ້າໜ້າທີ່ກວດກາຄຸນນະພາບ ບົນພື້ນຖານສົມທົບກັບພະແນກສາທາລະນະສຸກ ຂັ້ນແຂວງ, ນະຄອນຫຼວງວຽງຈັນ ຊ່ວຍຢັ້ງຢືນມາດຕະຖານໃຫ້.

2. ສຳລັບການກຳນົດລາຄາຂາຍຜ້າອັດປາກ-ດັງ ແຕ່ລະຊະນິດນັ້ນ ແມ່ນປະຕິບັດຕາມແຈ້ງການເພີ່ມເຕີມ ສະບັບເລກທີ 0347/ອຄ.ກຄພນ, ລົງວັນທີ 31 ມີນາ 2020 ໂດຍອະນຸຍາດໃຫ້ບວກກຳໄລຂາຍຍົກ 10% ຂອງຕົ້ນທຶນການນຳເຂົ້າ ແລະ ຖ້າສົ່ງໃຫ້ຮ້ານຂາຍຍ່ອຍ ແມ່ນໃຫ້ບວກກຳໄລ 10% ຂອງລາຄາຂາຍຍົກ.

3. ມອບໃຫ້ ພະແນກອຸດສະຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ລາຍງານຂໍທິດຊີ້ນຳຈາກຄະນະຊີ້ນຳວຽກງານຄຸ້ມຄອງລາຄາຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອກຳນົດລາຄາ, ວິທີການຈຳໜ່າຍ, ຈຸດຈຳໜ່າຍ ແລະ ການຄຸ້ມຄອງການຈຳໜ່າຍຕົວຈິງ ເພື່ອໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງຕາມຂັ້ນຕອນ ແລະ ວິທີ ທີ່ຂະແໜງການຕ່າງໆໄດ້ແຈ້ງອອກ ຫລີກເວັ້ນບໍ່ໃຫ້ເປັນການຊຸມນຸມຂອງຄົນຈຳນວນຫຼາຍ ແລະ ສຳຄັນແມ່ນຫຼີກເວັ້ນບໍ່ໃຫ້ບຸກຄົນໃດໜຶ່ງຊື້ໄປກັກຕຸນ ແລະ ຂາຍຕໍ່ໃນລາຄາທີ່ແພງເກີນກວ່າທີ່ໄດ້ກຳນົດໄວ້. ພາຍຫຼັງຄົ້ນຄ້ວາແລ້ວ ໃຫ້ນຳສະເໜີຕໍ່ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງ ກໍຄືຫົວໜ້າຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຂັ້ນແຂວງ, ນະຄອນຫຼວງວຽງຈັນ ເພື່ອຮັບຮອງ ແລະ ຈັດຕັ້ງປະຕິບັດຢູ່ແຂວງຂອງຕົນ.

4. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເອົາໃຈໃສ່ສົມທົບກັບພາກສ່ວນກ່ຽວຂ້ອງ ລົງຕິດຕາມກວດກາໃຫ້ເປັນປົກກະຕິ ຕິດຕາມອຳນວຍຄວາມສະດວກໃນການຂາຍ, ຖ້າຫາກພົບບໍລິສັດທີ່ຈຳໜ່າຍຜ້າອັດປາກ-ອັດດັງ ຫາກປະຕິບັດບໍ່ຖືກຕ້ອງຕາມການແນະນຳແລ້ວ, ໃຫ້ຮີບຮ້ອນລາຍງານຄືນຫົວໜ້າຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຂັ້ນແຂວງ ເພື່ອຂໍທິດຊີ້ນຳ ແລະ ຄວາມເປັນເອກະພາບໃນການປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຂອງແຕ່ລະຂະແໜງການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.ຯ

ລັດຖະມົນຕີ

ສົມຈິດ ອິນທະມິດ

<u>ຕິດຕໍ່ພົວພັນ:</u>

- ທ່ານ ເອກຕິສັກ ອຸດົມຮັກ.
- ໂທ: 020 99962645.